ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 0694 /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 11/03/1

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມກວດກາ

- ອີງຕາມ ດຳລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການນຳສະເໜີຂອງກົມກວດກາ ແລະ ການຄົ້ນຄວ້າຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງກົມກວດກາ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງກົມກວດກາ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມກວດກາ ຂຽນດ້ວຍຕົວອັກສອນຫຍໍ້ວ່າ " ກກ " ແມ່ນການຈັດຕັ້ງໜຶ່ງທີ່ສັງກັດໃນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດ ເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະນຳກະຊວງ ໃນການເຄື່ອນໄຫວວຽກງານຕິດຕາມ ກວດກາພັກ, ກວດກາລັດ ແລະ ຕິດຕາມແກ້ໄຂຜົນຂອງການກວດກາ, ຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ ຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3. ໜ້າທີ່

1. ຄົ້ນຄວ້າ, ຜັນຂະຫຍາຍແນວທາງນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ບັນດານິຕິກຳຕ່າງໆ ກ່ຽວກັບວຽກງານຕິດຕາມ, ກວດກາພັກ, ກວດກາລັດ ແລະ ຕິດຕາມແກ້ໄຂຜົນຂອງການກວດກາ, ຕ້ານການສໍ້ລາດບັງຫຼວງ ແລະ ສືບສວນ-ສອບສວນ, ກາຍເປັນແຜນການ, ແຜນງານ, ໂຄງການ ແລະ ວິທີການຈັດຕັ້ງປະຕິບັດໃນແຕ່ລະໄລຍະ;